# ປື້ມຄູ່ມື ຝຶກອົບຮົມຜູ້ນຳພາກິດຈະກຳເພື່ອນສອນເພື່ອນ
# ຊຸດກິດຈະກຳທັກສະຊີວິດຂັ້ນພື້ນຖານ

ວິທີການຈັດຕັ້ງປະຕິບັດວຽກງານໂພຊະນາການ
ຢູ່ໂຮງຮຽນມັດທະຍົມຕອນຕົ້ນແກ່ກຸ່ມໄວໜຸ່ມ

## ໂມດູນ 1: ວົງມົນແຫ່ງມິດຕະພາບ



ໂຄງການຮ່ວມມືປັບປຸງດ້ານໂພຊະນາການ

Save the Children
ສະຫະພາບ ເອີຣົບ
European Union
Comité de Coopération avec le Laos
CCL
ChildFund Laos

## ພາກສະເໜີ

ໃນເບື້ອງຕົ້ນ ພວກເຮົາຕ້ອງການບັນທຶກຈົດຈຳຄວາມກະຕັນຍູຮູ້ບຸນຄຸນຂອງພວກເຮົາມາຍັງເຈົ້າໜ້າທີ່ທາງການຂັ້ນແຂວງ ແລະ ຂັ້ນເມືອງຂອງກະຊວງສາທາລະນະສຸກ **MOH** ແລະ ກະຊວງສຶກສາທິການ ແລະ ກິລາ **MOSE** ສຳລັບການຊີ້ນຳ ແລະ ຊຸກຍູ້ສົ່ງເສີມການກຳນົດປຶ້ມຄູ່ມືການຝຶກອົບຮົມການຈັດກິດຈະກຳເພື່ອນສອນເພື່ອນເຫຼັ້ມນີ້ ແລະ ສະໜອງອຸປະກອນການຝຶກອົບຮົມສຳລັບໂຮງຮຽນມັດທະຍົມຕອນຕົ້ນ **LSS**

ໃນເບື້ອງຕົ້ນຂອງການກຳນົດໂຄງການ, ຄູ່ຮ່ວມງານຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການ ແລະ ຄູ່ຮ່ວມງານຂອງລັດຖະບານ, ບັນດາກຸ່ມຄູ່ຮ່ວມງານໄດ້ເຫັນດີເປັນເອກະພາບກັນວ່າ ພວກເຮົາຄົງຈະບໍ່ສາມາດອອກແບບລາຍການ ແລະ ອຸປະກອນໃໝ່ໄດ້ຢ່າງຄົບຖ້ວນ ແລະ ສົມບູນ ແຕ່ຈະໄດ້ກໍ່ສ້າງ ແລະ ປັບປຸງລາຍການຕ່າງໆທີ່ລັດຖະບານພ້ອມດ້ວຍຄູ່ຮ່ວມງານພັດທະນາວຽກງານດ້ານໂພຊະນາການທີ່ມີຢູ່ແລ້ວ. ການຄົ້ນຄວ້າຢ່າງກວ້າງຂວາງໄດ້ຈັດຕັ້ງຂຶ້ນເພື່ອສຳຫຼວດ, ອອກແບບ ແລະ ທົບທວນບັນດາອຸປະກອນການຝຶກອົບຮົມທີ່ມີຢູ່ແລ້ວໃນໄລຍະຜ່ານມາທີ່ໄດ້ຮັບການພັດທະນາໂດຍລັດຖະບານ ແລະ ຄ່ ູຮ່ວມງານອື່ນໆຂອງລັດຖະບານ ສ ປປ ລາວ ເພື່ອໃຫ້ທຽມທັນກັບບັດດາປະເທດເພື່ອນບ້ານ. ພວກເຮົາໄດ້ນຳມາເຊິ່ງອຸປະກອນທີ່ດີເລີດສອງສາມລາຍການ ແລະ ພາຍຫຼັງທີ່ມີການທົບທວນໃນໄລຍະສຳຄັນດັ່ງກ່າວຈຶ່ງໄດ້ຕັດສິນໃຈທັນມານຳໃຊ້ອຸປະກອນທີ່ນຳມາຈາກຫຼາຍແຫຼ່ງທີ່ແຕກຕ່າງກັນ.

1. ວິງມົນແຫ່ງມິດຕະພາບຈາກ ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ **SCI**
2. ບົດບາດ ຍິງ-ຊາຍ ຈາກ ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ **SCI** ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ **CARE**
3. ວີດີໂອກ່ຽວກັບວຽກງານດ້ານໂພຊະນາການທີ່ກເລື່ອງຈາກ ຊຸມຊົນຊື່ນໃຈ 'ຊຸດຄວາມສຸກຂອງຄອບຄົວ' ເປັນຄູ່ຮ່ວມງານກັບອົງການອາຫານໂລກ **WFP**, ອົງການ ອີຟັດ **IFAD** ແລະ ຄູ່ມືການຮຽນ-ການສອນຂອງຄູ ແລະ ປຶ້ມແບບຮຽນໂພຊະນາການສຳລັບນັກຮຽນຈາກອົງການກາແດງສະວິດສ ແລະ ອົງການກາແດງລາວ.
4. ຫຼັກສູດສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ປຶ້ມຄູ່ມືສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ **SRH** ຈາກ ສະຫະປະຊາຊາດ ກອງທຶນເພື່ອປະຊາກອນ **UNFPA**, ຊີເອສອີ **CSE** ແລະ ອົງການສາກົນ ບໍລິການປະຊາຊົນ **PSI Laos** "ຮັກມີແຜນ"

ພວກເຮົາໄດ້ດັດແກ້ເລັກນ້ອຍເພື່ອໃຫ້ເຂົ້າກັບສະພາບ, ເປົ້າໝາຍ ແລະ ໄລຍະເວລາຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການ.

ກິດຈະກຳ ແລະ ອຸປະກອນຕ່າງໆຈະໄດ້ນຳໄປທົດສອບຢູ່ໃນພາກສະໜາມ ກ່ອນທີ່ຈະສັງລວມລົງໃນປຶ້ມຄູ່ມືການຝຶກອົບຮົມບົດຮຽນເຫຼັ້ມນີ້.

ໃນນີ້ ພວກເຮົາຕ້ອງການຮັບຮອງເອົາການສະໜັບສະໜູນຈາກອົງການກາແດງສະວິດສ ແລະ ອົງການກາແດງລາວ. ອົງການອາຫານໂລກ **WFP**, ອົງການ ອີຟັດ **IFAD**, ສະຫະປະຊາຊາດ ກອງທຶນເພື່ອປະຊາກອນ **UNFPA**, ອົງການສາກົນ ບໍລິການປະຊາຊົນ **PSI Laos** ແລະ ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ **SCI** – ທີມງານປົກປ້ອງເດັກທີ່ອະນຸຍາດໃຫ້ພວກເຮົານຳໃຊ້ສື່ອຸປະກອນການຝຶກອົບຮົມວິທີການສຳລັບໂຮງຮຽນມັດທະຍົມຕອນຕົ້ນຂອງໂຄງການການຮ່ວມມືປັບປຸງດ້ານໂພຊະນາການ.

ພວກເຮົາຈຶ່ງຖືໂອກາດນີ້ສະແດງຄວາມຮູ້ບູນຄຸນມາຍັງຄູ່ຮ່ວມງານຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການທຸກທີ່ວໜ້າເປັນຕົ້ນແມ່ນອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ **CARE**, ອົງການຮ່ວມມືກັບປະເທດລາວ **CCL**

ແລະ ກອງທຶນຊ່ວຍເຫຼືອເດັກ ແລະ ທີມງານອົງການຊ່ວຍເຫຼືອເດັກສາກົນ **SCI** ທີ່ຊີ້ນຳ ແລະ ໃຫ້ການສະໜັບສະໜູນໃນການອອກແບບປຶ້ມຄູ່ມືການຝຶກອົບຮົມເຫຼັ້ມນີ້.

ພວກເຮົາເຊື່ອວ່າປຶ້ມຄູ່ມືຝຶກອົບຮົມເຫຼັ້ມນີ້ຄົງຈະມີປະໂຫຍດຕໍ່ກັບບັນດາຄູຝຶກ, ອາຈານ ແລະ ກຸ່ມເພື່ອນສອນເພື່ອນສຳລັບການຝຶກອົບຮົມວຽກງານທາງການປະພຶດຢ່າງມີປະສິດທິຜົນ. ການຝຶກອົບຮົມບາງຢ່າງຈະໃຊ້ເວລາຍາວນານ ແລະ ເປັນວິທີການແບບຕໍ່ເນື່ອງເຊິ່ງຕ້ອງໄດ້ມີການທົບທວນຄືນ ແລະ ມີການດັດແກ້ວິທີການຕ່າງໆຄື ສາລະບານ ແລະ ວິທີການສິດສອນ ດັ່ງນັ້ນ ພວກເຮົາຈຶ່ງຕ້ອງການນິຍາມປຶ້ມຄູ່ມືເຫຼັ້ມນີ້ເປັນດັ່ງໂຄງຮ່າງການເຮັດວຽກເພື່ອພວກເຮົາຈະສາມາດເປີດໂອກາດໃນການໃຫ້ຄຳແນະນຳ, ດັດແກ້ ແລະ ປ່ຽນແປງໄປຕາມຄວາມຮຽກຮ້ອງຕ້ອງການຂອງໂຄງການ ແລະ ຊຸມຊົນ.

## ໂຄງການຮ່ວມມືປັບປຸງດ້ານໂພຊະນາການ

ຢູ່ໃນປະເທດເຮົາ ເດັກນ້ອຍຈຳນວນຫຼວງຫຼາຍໄດ້ຮັບຜົນກະທົບຈາກການຂາດສານອາຫານ ນັ້ນໝາຍເຖິງການຈະເລີນເຕີບໂຕ ແລະ ການພັດທະນາການຂອງເຂົາບໍ່ເປັນໄປຕາມເກນອາຍຸຂອງພວກເຂົາ. ເພາະສະນັ້ນ ຄູ່ຮ່ວມງານກັບລັດຖະບານ, ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ **SCI** ແລະ ຄູ່ຮ່ວມງານອື່ນໆຈຶ່ງໄດ້ເປີດກອງປະຊຸມສຳມະນາໂຄງການການຮ່ວມມືປັບປຸງໂພຊະນາການ ເພື່ອກ່າວຄຳປາໄສກ່ຽວກັບບັນຫາການຂາດສານອາຫານເຫຼົ່ານີ້. ໃນເລື່ອງຂອງໂຄງການການຮ່ວມມືປັບປຸງດ້ານໂພຊະນາການ **‘SCALING’** ທີ່ຫຍໍ້ມາຈາກ (**Sustainable change Achieved by Linking Improved Nutrition and Governance**) ເຊິ່ງເປັນໂຄງການຂອງບັນດາຂະແໜງການຕ່າງໆເພື່ອປັບປຸງຄວາມປອດໄພຂອງອາຫານ ແລະ ໂພຊະນາການໃຫ້ຈຳນວນຫົວໜ່ວຍຄົວເຮືອນໃນເຂດຊົນນະບົດພາຍໃນ 14 ເມືອງທີ່ຖືກຄັດເລືອກເປັນເປົ້າໝາຍໃນ ແຂວງ ຫົວພັນ, ຫຼວງນ້ຳທາ, ຫຼວງພະບາງ ແລະ ຜົ້ງສາລີ ທາງພາກເໜືອຂອງ ສ ປປ ລາວ. ໂຄງການໄດ້ຮັບການສະໜັບສະໜູນທຶນໂດຍສະຫະພັບເອີຣົບ(**EU**) ແລະ ໄດ້ຮັບການຈັດຕັ້ງປະຕິບັດໂດຍກຸ່ມຄູ່ຮ່ວມງານ 4ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານຄື: ອົງການແຄຣ໌ ນານາຊາດປະຈຳ ສປປ ລາວ **CARE,** ອົງການຮ່ວມມືກັບປະເທດລາວ **CCL,** ອົງການກອງທຶນຊ່ວຍເຫຼືອເດັກ **CFL,** ແລະ ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ **SCI** ເຊິ່ງເປັນຄູ່ຮ່ວມງານທີ່ນຳພາທາງ. ຈຸດປະສົງອັນຕົ້ນຕໍແມ່ນເລັ່ງໃສ່ກຸ່ມໄວໜຸ່ມຍິງ ແລະ ຊາຍ. ວິທີການຮຽນແບບເປັນກຸ່ມເພື່ອນສອນເພືອນອາດຈະຖືກນຳໃຊ້ເພື່ອປູກຈິດສຳນຶກ ແລະ ປ່ຽນແປງພຶດຕິກຳໃນກຸ່ມໄວໜຸ່ມກ່ຽວກັບວຽກງານດ້ານໂພຊະນາການ, ສຸຂະອະນາໄມ, ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ບົດບາດ ຍິງ-ຊາຍ. ການຮຽນແບບເປັນກຸ່ມເພື່ອນສອນເພື່ອນຈະໄດ້ຮັບການຈັດຕັ້ງປະຕິບັດໂດຍເດັກຍິງ ແລະ ເດັກຊາຍທີ່ຖືກເລືອກຢູ່ໃນໂຮງຮຽນມັດທະຍົມຕອນຕົ້ນໃນຂົງເຂດຂອງໂຄງການເພື່ອຮ່ວມກັນຮຽນຮູ້ຫົວຂໍ້ຕ່າງໆດ້ວຍການເຮັດກິດຈະກຳທີ່ສະໜຸກສະໜານ.

## ກິດຈະກຳຂອງໂຄງການຮ່ວມມືປັບປຸງດ້ານໂພຊະນາການຢູ່ໃນໂຮງຮຽນມັດທະຍົມຕອນຕົ້ນ

ການຮຽນແບບເປັນກຸ່ມເພື່ອນສອນເພື່ອນຈະໄດ້ຈັດຂຶ້ນສອງຄັ້ງພາຍໃນແຕ່ລະເດືອນຕິດຕໍ່ກັນໃນລະຫວ່າງສອງສາມເດືອນ.

ໃນທຸກໆກິດຈະກຳແມ່ນເພື່ອແນໃສ່ການພັດທະນາທັກສະດ້ານຄວາມຮູ້, ຄຸນສົມບັດ, ຄວາມເຊື່ອຖື ແລະ ທັກສະດ້ານອື່ນໆຂອງກຸ່ມໄວໜຸ່ມ ຍິງ-ຊາຍ (ເດັກໃນເກນອາຍຸ 10-14 ປີ ຫຼື ນັກຮຽນ ຊັ້ນ ມ1- ມ3) ເພື່ອເຮັດໃຫ້ເຂົາເຈົ້າມີຄວາມຮັບຜິດຊອບຕໍ່ສຸຂະພາບຂອງຕົນເອງ. ສິ່ງທ້າທາຍຕ່າງໆອາດຈະເປັນເປົ້າໝາຍທັງເດັກຍິງ ແລະ ຊາຍ ເພາະວ່າການຕອບສະໜອງຄວາມຕ້ອງການທາງດ້ານໂພຊະນາການ ແລະ ສິ່ງທ້າທາຍໃນເລື່ອງບົດບາດ ຍິງ-ຊາຍ ເປັນບັນທັດຖານທີ່ຈຳເປັນທີ່ຈະຕ້ອງໄດ້ມີສ່ວນຮ່ວມທັງສອງເພດໄປພ້ອມໆກັນ. ແຕ່ລະກຸ່ມຂອງກອງປະຊຸມໄວໜຸ່ມຍິງ-ຊາຍຈະຕ້ອງປະກອບມີຫົວຂໍ້ສະເພາະທີ່ຈະນຳມາສົນທະນາ. ສິ່ງທ້າທາຍເຫຼົ່ານີ້ອາດຈະຊ່ວຍໃຫ້ໄວໜຸ່ມ ຍິງ-ຊາຍ ໄດ້ມີໂອກາດເປີດອົກເປີດໃຈພ້ອມໄຂຂໍ້ສົງໃສຂອງຕົນເອງຕໍ່ກັບບັນຫາຕ່າງໆໃຫ້ແຈ່ມແຈ້ງຂຶ້ນ ພ້ອມທັງຍັງສາມາດແກ້ໄຂຄວາມກັງວົນໃຈຕ່າງໆໂດຍຜ່ານຄວາມຈິງທາງວິທະຍາສາດ. ເພື່ອເຮັດໃຫ້ວິທີການດັ່ງກ່າວມີຄວາມຕື່ນເຕັ້ນຈະຕ້ອງໄດ້ນຳໃຊ້ສື່ອຸປະກອນຕ່າງໆເຊັ່ນ: ການເລົ່າເລື່ອງ, ວິດີໂອ, ຮູບເງົາ, ສິລະປະ ແລະ ຫັດຖະກຳ (ກາຕູນ, ອື່ນໆ), ລະຄອນ, ການສະແດງບົດບາດສົມມຸດ ແລະ ອື່ນໆ. ເດັກນັກຮຽນຈະມີຄວາມມ່ວນຊື່ນ, ກະຕືລືລົ້ນໃນການຮໍ່າຮຽນເພື່ອປ່ຽນແປງພຶດຕິກຳຂອງເຂົາເຈົ້າ.

ບົດຮຽນເຫຼົ່ານີ້ອາດຈະໄດ້ນຳໃຊ້ໃນເວລາເຮັດກິດຈະກຳເພື່ອນສອນເພື່ອນໃນຫ້ອງຮຽນ.

| ລາຍລະອຽດຂອງບົດຮຽນຕ່າງໆ | |
|---|---|
| 1 | ວົງມົນແຫ່ງມິດຕະພາບ/ຮູ້ຈັກເຊິ່ງກັນ ແລະ ກັນ |
| 2 | ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ໄວໜຸ່ມເປັນຕົວແທນໃນການປ່ຽນແປງ |
| 3 | ໂພຊະນາການ (ພາກທີ 1) |
| 4 | ໂພຊະນາການ (ພາກທີ 2) |
| 5 | ໂພຊະນາການ (ພາກທີ 3) |
| 6 | ເພດສຶກສາ ແລະ ສຸຂະພາບຈະເລີນພັນ |
| 7 | ນໍ້າ, ສຸຂາພິບານ ແລະ ສຸຂະອະນາໄມສ່ວນບຸກຄົນ |

## ສາລະບານ


**ຄຳນຳ** ... 4

**ຂໍ້ມູນຂ່າວສານກ່ຽວກັບບົດຮຽນ:** ... 4

**ຈຸດປະສົງຂອງການຮຽນຮູ້** ... 4

**ກິດຈະກຳ 1.1 ເກມການເອີ້ນຊື່** ... 6

**ກິດຈະກຳ 2.1 ບຸກຄະລິກ ແລະ ຄວາມສາມາດສະເພາະຕົວ** ... 7

**ກິດຈະກຳ 3.1: ການສ້າງກົດລະບຽບໃນຫ້ອງຮຽນ** ... 8

**ກິດຈະກຳ 4.1: ການທົດສອບ** ... 9

**ສະຫຼຸບ / ຄຳເວົ້າສຸດທ້າຍ** ... 10

## ຄຳນຳ

ສຳລັບຫ້ອງຮຽນທີ່ບັນລູຜົນມັນມີຄວາມສຳຄັນຫຼາຍທີ່ສະມາຊິກພາຍໃນກຸ່ມຈະຕ້ອງໄດ້ໂຕ້ຕອບກັນຢ່າງເປັນອິດສະຫຼະໂດຍປາສະຈາກຄວາມລັ່ງເລໃຈ, ຄວາມຢ້ານກົວເຊິ່ງກັນ ແລະ ກັນ ແລະ ກຸ່ມນັກຮຽນດ້ວຍກັນ. ກຸນແຈທີ່ເປັນຈຸດປະສົງທີ່ສຳຄັນແມ່ນການຊ່ວຍເຮັດໃຫ້ພວກເຂົາຮູ້ສຶກກະຕວງໄປພ້ອມໆກັນເພື່ອເຮັດໃຫ້ການຮຽນງ່າຍຂຶ້ນ ແລະ ສະໜຸກສະໜານເຊິ່ງເປັນຜົນດີທີ່ເຮັດໃຫ້ພວກເຂົາຮູ້ສຶກວ່າໄດ້ເປັນສ່ວນໜຶ່ງຂອງກຸ່ມຫຼາຍຂຶ້ນ.

ກິດຈະກຳຕ່າງໆໃນບົດທີ່ນີ້ຈະຊ່ວຍເຮັດໃຫ້ເຈົ້າຮູ້ຈັກກັບສະມາຊິກພາຍໃນກຸ່ມຫຼາຍຂຶ້ນ ແລະ ທັງຍັງຈະເຮັດໃຫ້ການດຳເນີນກິດຈະກຳ ແລະ ການຕັ້ງຂັ້ນຕອນຂອງການຮຽນສະດວກສະບາຍຂຶ້ນ. ການຕຽມການ ຫຼື ການອຸ່ນເຄື່ອງມັນເປັນສິ່ງຈຳເປັນທີ່ຈະຊ່ວຍໃຫ້ສະມາຊິກພາຍໃນກຸ່ມໄດ້ມີໂອກາດໄດ້ຮູ້ຈັກກັນ ແລະ ບໍ່ຕົກໃຈໃນເວລາເຮັດກິດຈະກຳພາຍໃນກຸ່ມເພື່ອນສອນເພື່ອນ.

### ຄຳແນະນຳສຳລັບກິດຈະກຳເພື່ອນສອນເພື່ອນ

ຂໍ້ມູນຂ່າວສານກ່ຽວກັບບົດຮຽນ:

ວົງມົນແຫ່ງມິດຕະພາບເປັນວາລະໂອກາດແຫ່ງການຮຽນຮູ້ເຊິ່ງກັນ ແລະ ກັນ ລະຫວ່າງເດັກຍິງ ແລະ ເດັກຊາຍຄົນອື່ນໆພາຍໃນກຸ່ມໃນເວລາເລົ່າເລື່ອງຮ່ວມກັນ, ອອກຄວາມຄິດ ແລະ ຮຽນຮູ້ທັກສະອັນໃໝ່ໆໄປພ້ອມໆກັນ.

ຈຸດປະສົງຂອງການຮຽນຮູ້

- ເພື່ອເຮັດໃຫ້ສະມາຊິກພາຍໃນກຸ່ມແຕ່ລະຄົນຮູ້ສຶກສະດວກສະບາຍ ແລະ ຜ່ອນຄາຍ.
- ເພື່ອເຮັດໃຫ້ສະພາບຂອງຕົນເອງຢູ່ໃນພາວະປົກກະຕິໃນເວລາມາພົ້ກັບສະມາຊິກຄົນອື່ນໆພາຍໃນກຸ່ມ.
- ເພື່ອເຮັດໃຫ້ການແນະນຳຕົວຂອງສະມາຊິກແຕ່ລະຄົນພາຍໃນກຸ່ມ ແລະ ຜູ້ນຳພາກິດຈະກຳເພື່ອນສອນເພື່ອນສະດວກສະບາຍຂຶ້ນ.

| ກອບເວລາການນຳສະເໜີກິດຈະກຳ ຫຼື ພາກຕ່າງໆຂອງບົດຮຽນ | | |
|---|---|---|
| **ລຳດັບ ກິດຈະກຳ** | **ຊື່ກິດຈະກຳ** | **ໄລຍະເວລາ** |
| **ສະເໜີຈຸດປະສົງຂອງບົດຮຽນ** | | 10 ນາທີ |
| **1.1** | ເກມການເອີ້ນຊື່ | 30 ນາທີ |
| **2.1** | ບຸກຄະລິກກະພາບ ແລະ ຄວາມສາມາດສະເພາະຕົວ | 40 ນາທີ |
| **3.1** | ການສ້າງກົດລະບຽບໃນຫ້ອງຮຽນ | 20 ນາທີ |
| **4.1** | ການທົດສອບ | 30 ນາທີ |
| ສະຫຼຸບ/ ຄຳເວົ້າສຸດທ້າຍ | | 10 ນາທີ |
| | | **140** ນາທີ |

## ເລີ່ມກິດຈະກຳ

**ເວລາ: 10 ນາທີ**

**ການນຳສະເໜີຈຸດປະສົງຂອງບົດຮຽນໃນມື້ນີ້. ອ່ານດັ່ງ:** ມື້ນີ້ເປັນມື້ທຳອິດຂອງການຈັດກິດຈະກຳໃນໂຮງຮຽນມັດທະຍົມຕອນຕົ້ນ (LSS) ແລະ ພວກເຮົາຈະໄປຮູ້ຈັກກັບເດັກຍິງ ແລະ ເດັກຊາຍຄົນອື່ນໆພາຍໃນກຸ່ມ ແລະ ຈະໄດ້ເລົ່າເລື່ອງ, ອອກຄວາມຄິດ ແລະ ຮຽນຮູ້ທັກສະອັນໃໝ່ໆໄປພ້ອມໆກັນ.

ອາທິດໜ້າ ພວກເຮົາຈະໄດ້ຮຽນຮູ້ເລື່ອງຂອງບົດບາດຍິງ-ຊາຍ, ໂພຊະນາການ, ສຸຂະອະນາໄມ, ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ຈາກນັ້ນ ຈະໄດ້ຫຼິ້ນເກມຫຼາຍໆຊະນິດ. ທຸກກິດຈະກຳຈະໄດ້ມີການຖາມ-ຕອບຄຳຖາມພາຍໃນກຸ່ມ, ດັ່ງນັ້ນ ທຸກຄົນຈຶ່ງຈຳເປັນຈະຕ້ອງໄດ້ເຂົ້າຮ່ວມ.

**ເວົ້າຕໍ່:** ພວກເຮົາມາແນະນຳຕົວກັນກ່ອນ, ດັ່ງທີ່ພວກເຮົາຮູ້ແລ້ວວ່າພວກເຮົາແມ່ນໃຜ ແຕ່ພວກເຮົາຍັງຕ້ອງການໃຫ້ພວກເຈົ້າໄດ້ແນະນຳຕົວໂດຍຫຍໍ້ກ່ຽວກັບພາລະບົດບາດຂອງຕົນເອງສູ່ໝູ່ເພື່ອນໃນຫ້ອງຟັງ.

ແນະນຳຕົວໄປເທື່ອລະຄົນເຊັ່ນ **ເວົ້າວ່າ** ຂ້ອຍແມ່ນນັກຮຽນ; ຂ້ອຍຊື່...........................,ຂ້ອຍກຳລັງຮຽນຢູ່ຊັ້ນ/ຫ້ອງ.................,ຂ້ອຍອາຍຸໄດ້..............ປີ ດັ່ງນີ້ເປັນຕົ້ນ.

**<u>ບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຕົນເອງ:</u>**

**ໃຫ້ເວົ້າວ່າ:** ພວກເຮົາແມ່ນກຸ່ມຜູ້ນຳພາກິດຈະກຳເພື່ອນສອນເພື່ອນທີ່ສາມາດໄວ້ໃຈໄດ້ ແລະ ການຈັດກິດຈະກຳເພື່ອນສອນເພື່ອນເປັນສະພາບແວດລ້ອມທີ່ປອດໄພທີ່ຈະຖາມຄຳຖາມ, ສະແດງຄວາມຮູ້ສຶກ ແລະ ອອກຄວາມຄິດເຫັນ. ທ່ານບໍ່ຕ້ອງຕັດສິນສິ່ງທີ່ທ່ານຄິດ ຫຼື ທ່ານເວົ້າດ້ວຍຕົວຂອງທ່ານເອງ. ບໍ່ມີຄຳຖາມໃດທີ່ຖືກ ຫຼື ຜິດ. ທ່ານຕ້ອງການຖາມຫຍັງກໍໄດ້ຂໍພຽງແຕ່ຕ້ອງໃຫ້ຄວາມເຄົາລົບໃນເວລາຖາມ. ຖ້າທ່ານຮູ້ສຶກວ່າບໍ່ສະດວກທີ່ຈະຖາມຢູ່ໃນຫ້ອງຮຽນກໍໃຫ້ທ່ານຖາມເປັນການສ່ວນຕົວນຳຜູ້ນຳພາກິດຈະກຳເພື່ອນສອນເພື່ອນ, ອາຈານຂອງພວກເຮົາ ແລະ ພວກເຮົາຈະພະຍາຍາມຕອບຄຳຖາມໃຫ້ດີທີ່ສຸດເທົ່າທີ່ຈະຕອບໄດ້. ເຖິງຢ່າງໃດກໍຕາມ ຖ້າພວກເຮົາບໍ່ສາມາດຕອບຄຳຖາມຂອງທ່ານໄດ້ໃນຕອນນີ້, ພວກເຮົາກໍຈະນຳໄປຄົ້ນຄວ້າ ເມື່ອໄດ້ຄຳຕອບແລ້ວຈະມາຕອບໃຫ້ຕາມພາຍຫຼັງ ຫຼື ຈະນຳເອົາມາສົນທະນາຢູ່ໃນກອງປະຊຸມຄັ້ງຕໍ່ໄປ. ພວກເຮົາຈະຕອບຄຳຖາມຂອງທຸກໆຄົນ. ສິ່ງໃດທີ່ພວກທ່ານຖາມພວກເຮົາເປັນການສ່ວນຕົວແມ່ນພວກເຮົາຈະຖືເປັນຄວາມລັບ.

**ເວົ້າວ່າ:** ຖ້າທ່ານຢາກຈະເວົ້າ ຫຼື ແລກປ່ຽນຄຳເຫັນ ແລະ ອອກຄວາມຄິດຢູ່ພາຍໃນຫ້ອງຮຽນ, ທ່ານຄວນຈະຍົກມືຂຶ້ນເພື່ອຂໍອະນຸຍາດ ແລະ ລໍຖ້າຈົນກວ່າພວກເຮົາຈະອະນຸຍາດໃຫ້ທ່ານເວົ້າ.

**ເວົ້າວ່າ:** ບາງຄັ້ງ, ພວກເຮົາຈະອະທິບາຍສິ່ງຕ່າງໆທີ່ທ່ານອາດຈະເຫັນດີ ຫຼື ບໍ່ເຫັນດີນຳເຂົາເຈົ້າ ແຕ່ຈົ່ງໃຫ້ຄວາມເຄົາລົບເຊິ່ງກັນ ແລະ ກັນ. ເຖິງແມ່ນວ່າ ທ່ານຈະບໍ່ເຫັນດີນຳເພື່ອນຮ່ວມຫ້ອງກໍ່ຕາມ ແຕ່ຈົ່ງໃຫ້ກຽດ ຫຼື ໂອກາດເຂົາເຈົ້າ

ເວົ້າໄປກ່ອນ. ທຸກຢ່າງທີ່ເວົ້າຢູ່ໃນວົງມົນແຫ່ງມິດຕະພາບ, ຈົ່ງຮັກສາໄວ້ໃນວົງມົນແຫ່ງມິດຕະພາບ.

**ເວົ້າວ່າ:** ດຽວນີ້, ມາຫຼິ້ນເກມໃດໜຶ່ງເພື່ອໃຫ້ຮູ້ຈັກກັນ ແລະ ໃຫ້ກາຍເປັນວົງມົນແຫ່ງມິດຕະພາບ.

## ກິດຈະກໍາ 1.1 ເກມການເອີ້ນຊື່

**ຈຸດປະສົງຂອງເກມ:** ນີ້ແມ່ນເກມການອຸ່ນເຄື່ອງຫຼິ້ນເພື່ອຄວາມສະໜຸກສະໜານ ແລະ ໃຫ້ແນ່ໃຈວ່າເພື່ອນຮ່ວມຫ້ອງ ຫຼື ເພື່ອນຮ່ວມກຸ່ມທຸກຄົນຈະຕ້ອງຮູ້ຈັກຊື່ຂອງກັນ ແລະ ກັນ.

**ເວລາ:** 30 ນາທີ

**ການກະກຽມອຸປະກອນ:** ຖ້ວຍ(ແອ່ງ), ເຈ້ຍຊື່ເກມ, ຕາຕະລາງຄໍາແນະນໍາໂຄງສ້າງເກມ (ໂດຍອີງໃສ່ເອກະສານຊ້ອນທ້າຍວົງມົນແຫ່ງມິດຕະພາບ), ບິກເຟີດ, ເຈ້ຍແຜ່ນໃຫຍ່.

## ການກະກຽມກ່ອນການເລີ່ມກິດຈະກໍາ:

**ສ້າງ**ລາຍຊື່ຂອງປະໂຫຍກ ຫຼື ຄໍາສັບທີ່ໄດ້ເວົ້າເຖິງ ແລະ ຄວບຄູ່ກັນເລື້ອຍໆ ພ້ອມສາທິດຄວາມສໍາຄັນຂອງການຈັບຄູ່ກັນ. ດັ່ງໃນບາງຕົວຢ່າງຂອງການຈັບຄູ່ກັນຂອງຄໍາສັບດັ່ງລຸ່ມນີ້:

| | |
|---|---|
| • ຊາ & ນ້ຳຕານ | • ອາກາດ & ສິ່ງແວດລ້ອມ |
| • ຄວາມງາມ & ສະໝອງ | • ເຈ້ຍ & ປາກກາ |
| • ດວງດາວ & ດວງເດືອນ | • ສີດໍາ & ສີຂາວ |
| • ຕົ້ນໄມ້ & ແຜນດິນ | • ໝາກໄມ້ & ນ້ຳໝາກໄມ້ |
| • ນ້ຳ & ສາຍນ້ຳ | • ໄກ່ & ປາ |
| • ຄໍາ & ເພັດ | • ຮ້ອນ & ໜາວ |

**ສ້າງ**ເຈ້ຍສອງແຜ່ນໂດຍໃຊ້ຄໍາສັບແຕກຕ່າງກັນແຕ່ສາມາດຈັບຄູ່ກັນໄດ້ອອກເປັນຫຼາຍໆຄູ່- ຕົວຢ່າງ ແຜ່ນໜຶ່ງແມ່ນ ນ້ຳຊາ ແລະ ອີກແຜ່ນໜຶ່ງແມ່ນ ນ້ຳຕານ ແລ້ວນໍາໄປປົນໃສ່ກັນໃນຖ້ວຍ/ກອງ ທີ່ກຽມໄວ້ກ່ອນຈະເລີ່ມຢິບອອກມາ.

## ເກມການເອີ້ນຊື່:

1. **ຄໍາແນະນໍາສໍາລັບການຫຼິ້ນເກມ. ອ່ານດັງໆ**: ກິດຈະກໍາຕໍ່ໄປນີ້ພວກເຮົາຈະໄດ້ຫຼິ້ນເກມ ແລະ ຫຼັງຈາກນັ້ນ ພວກເຮົາຈຶ່ງຈະແນະນໍາຊື່ໃນຕອນຕໍ່ໄປ.
2. **ວາງ**ຖ້ວຍ/ກອງ(ແອ່ງ)ທີ່ບັນຈຸເຈ້ຍຊື່ເກມໄວ້ເທິງໂຕະ ແລ້ວ**ແນະນໍາ**ໃຫ້ສະມາຊິກແຕ່ລະຄົນຢິບເອົາເຈ້ຍຊື່ເກມຂຶ້ນມາຄົນລະແຜ່ນພ້ອມຊອກຫາຈັບຄູ່ກັນຢູ່ພາຍໃນກຸ່ມ. ສະມະຊິກພາຍໃນກຸ່ມຕ້ອງຊອກຫາຈັບຄູ່ຂອງຕົນເອງຫຼັງຈາກທີ່ຢິບເອົາເຈ້ຍລາຍຊື່ນັ້ນອອກມາ, ຕົວຢ່າງ: ຜູ້ທີ່ຢິບໄດ້ເຈ້ຍທີ່ຂຽນວ່າ ນ້ຳຊາ ຈະຕ້ອງໄດ້ຊອກຈັບຄູ່ກັບຜູ້ທີ່ຢິບເຈ້ຍທີ່ຂຽນວ່າ ນ້ຳຕານ ແລະ ຜູ້ທີ່ຢິບໄດ້ເຈ້ຍທີ່ຂຽນວ່າ ຄວາມງາມ ຕ້ອງຊອກຈັບຄູ່ກັບ ຜູ້ທີ່ມີເຈ້ຍທີ່ຂຽນວ່າ ສະໝອງ ແລະ ອື່ນໆ.
3. **ຈົ່ງຊຸກຍູ້ໃຫ້**ເດັກແຕ່ລະເອີ້ນຊື່ຂາຄູ່ຂອງພວກເຂົາຖ້າພວກເຂົາຊອກບໍ່ເຫັນ.
4. **ແນະນໍາໃຫ້** ພວກເຂົານັ່ງຢູ່ນໍາກັນເປັນຄູ່
5. **ແນະນໍາໃຫ້** ແຕ່ລະຄູ່ກະກຽມແນະນໍາຕົວນໍາຂາຄູ່ຂອງພວກເຂົາດັ່ງນີ້:

– ຊື່..................................................

– ອາຍຸ.............................................

– ແນະນຳສິ່ງທີ່ ທ້າວ/ນາງ ມັກທີ່ສຸດຢູ່ໃນບ້ານຂອງເຂົາມາອັນໜຶ່ງ

– ສິ່ງໃດໜຶ່ງທີ່ ທ້າວ/ນາງ ຕ້ອງການປັບປຸງ ຫຼື ປ່ຽນແປງ

6. **ທ່ານ** (ຜູ້ນຳພາກິດຈະກຳເພື່ອນສອນເພື່ອນ) ກໍ່ແມ່ນຜູ້ໜຶ່ງທີ່ມີສ່ວນຮ່ວມໃນການເຮັດກິດຈະກຳການແນະນຳຕົວເຊັ່ນກັນ ແລະ ກໍເປັນສ່ວນໜຶ່ງພາຍໃນກຸ່ມ.
7. **ໃຫ້**ເວລາກະກຽມການແນະນຳຕົວພາຍໃນກຸ່ມ 5–10 ນາທີ . ດຽວນີ້ ເອີ້ນຊື່ແຕ່ລະຄູ່ຂຶ້ນແນະນຳຄູ່ຂອງເຂົາສູ່ທຸກຄົນພາຍໃນຫ້ອງຟັງ.

**ສະຫຼຸບບົດຮຽນໂດຍຫຍໍ້**

**ອ່ານດັງໆ**:

- ມັນເປັນເວລາສຳຄັນຫຼາຍທີ່ພວກເຮົາທຸກຄົນທີ່ໄດ້ໂອ້ລົມກັນ, ໄດ້ເຮັດວຽກຮ່ວມກັນ, ສະໜຸກສະໜານ ແລະ ໄດ້ຍິ້ມໄດ້ຫົວໄປດ້ວຍກັນ.
- ພວກເຮົາທຸກຄົນມີຄວາມໄຝ່ຝັນ ເພື່ອຈະໃຫ້ຄວາມຝັນກາຍເປັນຈິງສຳລັບຄອບຄົວ, ໝູ່ເພື່ອນ, ຊຸມຊົນ, ໝູ່ບ້ານ ແລະ ລວມທັງຕົນເອງ. ລອງມາຈິນຕະນາການເບິ່ງວ່າ ຊີວິດຈະເປັນແນວໃດຖ້າພວກເຮົາບໍ່ມີຄວາມໄຝຝັນ**?**
- ໃຫ້ຈື່ສະເໝີວ່າ ການຈຳຊື່ຂອງສະມາຊິກແຕ່ລະຄົນພາຍໃນກຸ່ມແມ່ນບາດກ້າວໜຶ່ງທີ່ຟື້ນຟູຄວາມໄວ້ວາງໃຈລະຫວ່າງຄົນສອງຄົນ.

**ສິ່ງດັ່ງກ່າວ ແມ່ນສິ່ງທີ່ພວກເຮົາພະຍາຍາມຈະກາຍເປັນ'ສະມາຊິກຂອງກຸ່ມເພື່ອນສອນເພື່ອນ'**

## ກິດຈະກຳ 2.1 ບຸກຄະລິກ ແລະ ຄວາມສາມາດສະເພາະຕົວ

**ຈຸດປະສົງ:** ເພື່ອສ້າງຄວາມເຂົ້າໃຈກ່ຽວບຸກຄະລິກ ແລະ ຄວາມສາມາດສະເພາະຕົວ.

**ເວລາ:** 40 ນາທີ

**ການກະກຽມອຸປະກອນ:** ເຈ້ຍແຜ່ນໃຫຍ່ສຳລັບແຕ້ມຮູບ, ສໍສີ, ສໍດຳ, ຢາງລຶບ ແລະ ໂຮງແຫຼມສໍ.

## ເລີ່ມກິດຈະກຳ

1. **ຄຳແນະນຳສຳລັບກິດຈະກຳການຫຼິ້ນເກມ. ອ່ານດັງໆ:** ໃນກິດຈະກຳການຫຼິ້ນເກມນີ້ພວກເຮົາຈະສ້າງຄວາມເຂົ້າໃຈກ່ຽວກັບບຸກຄະລິກ ແລະ ຄວາມສາມາດສະເພາະຕົວຂອງພວກເຮົາ ເຊິ່ງພວກເຮົາແຕ່ລະຄົນລ້ວນແຕ່ມີບຸກຄະລິກ ແລະ ຄວາມສາມາດສະເພາະຕົວທີ່ແຕກຕ່າງກັນໃນຫຼາຍໆດ້ານ.
2. **ແບ່ງ**ນັກຮຽນອອກເປັນ 4 ກຸ່ມ ໂດຍນັບແຕ່ 1-4
3. **ຢາຍ**ເຈ້ຍໃຫ້ຜູ້ເຂົ້າຮ່ວມຫຼິ້ນເກມຄົນລະໜຶ່ງແຜ່ນ ພ້ອມດ້ວຍສໍສີເພື່ອໃຫ້ໃຊ້ຮ່ວມກັນ.
4. **ເຊື້ອເຊີນ**ຜູ້ເຂົ້າຮ່ວມຫຼິ້ນເກມແຕ່ລະຄົນຄິດແຕ້ມກ່ຽວກັບບາງສິ່ງທີ່ພວກເຂົາຖະໜັດ ແລະ ເໝືອນທີ່ສຸດ.

5. **ເວົ້າວ່າ** ພວກທ່ານແຕ່ລະຄົນຈະຖະໜັດແຕ້ມບາງສິ່ງບາງຢ່າງ. ສິ່ງນັ້ນ ມັນແມ່ນຫຍັງ? ແລ້ວເລີ່ມແຕ້ມສິ່ງດັ່ງກ່າວລົງໃນເຈ້ຍ ຈາກນັ້ນ ຈຶ່ງລະບາຍສີໄດ້ຕາມໃຈ.
6. **ໃຫ້**ເວລາຜູ້ເຂົ້າຮ່ວມຫຼິ້ນເກມພາຍໃນ 15 ນາທີ ເພື່ອແຕ້ມຮູບໃຫ້ສຳເລັດ ຈາກນັ້ນ ຍ່າງເລາະເບິ່ງຜູ້ເຂົ້າຮ່ວມແຕ່ລະຄົນພາຍໃນຫ້ອງວ່າມີໃຜທີ່ຕ້ອງການຄວາມຊ່ວຍເຫຼືອ ຫຼື ບໍ່. ນັກຮຽນບາງຄົນອາດຈະຖາມວ່າ ພວກເຂົາຖະໜັດແຕ້ມຫຍັງ ແລະ ສິ່ງນັ້ນມັນຈະເປັນລັກສະນະແບບໃດ.
7. **ແນະນຳ**ໃຫ້ຜູ້ເຂົ້າຮ່ວມຫຼິ້ນເກມແຕ່ລະຄົນພາຍໃນກຸ່ມສະແດງຮູບແຕ້ມຂອງພວກເຂົາ ແລະ ອະທິບາຍຄວາມໝາຍຂອງຮູບທີ່ແຕ້ມອອກມາ.
8. **ຕໍ່ມາ, ໃຫ້ຢາຍ**ເຈ້ຍແຜ່ນໃຫຍ່ໃຫ້ແຕ່ລະກຸ່ມຄົນລະໜຶ່ງແຜນ ພ້ອມແນະນຳໃຫ້ພວກເຂົາມີສ່ວນຮ່ວມໃນການແຕ້ມຮູບ.
9. **ໃຫ້**ເວລາທຸກກຸ່ມ 15 ນາທີ ເພື່ອແຕ້ມຮູບໃຫ້ສຳເລັດ
10. **ແນະນຳໃຫ້**ແຕ່ລະກຸ່ມນຳສະເໜີຮູບແຕ້ມຂອງຕົນເອງ

> **<u>ສະຫຼຸບບົດຮຽນ ແລະ ການພົວພັນ/ສຳພັນໂດຍຫຍໍ້</u>**
>
> **ເວົ້າວ່າ** ກິດຈະກຳນີ້ເປັນການເລີ່ມຕົ້ນຂອງການປະຊຸມຮ່ວມກັນ.
> ພວກເຮົານຳເອົາບາງສິ່ງບາງຢ່າງມາໃນເວລາຈັດກິດຈະກຳດັ່ງກ່າວ. ບາງທີ ມີບາງຄົນສາມາດປຸງແຕ່ງອາຫານແຊບໆ ຫຼື ບາງຄົນມີຄວາມເປັນມິດທີ່ດີ. ແຕ່ລະຄົນອາດຈະມີແນວທາງເປັນຂອງຕົນເອງ, ດັ່ງນັ້ນ ພວກເຮົາຕ້ອງໃຫ້ຄວາມເຄົາລົບຄວາມສາມາດ ແລະ ທັກສະຂອງກັນ ແລະ ກັນຢູ່ສະເໝີ

## ກິດຈະກຳ 3.1: ການສ້າງກົດລະບຽບໃນຫ້ອງຮຽນ

**ຈຸດປະສົງ:** ເພື່ອເປັນການຕັ້ງກົດພື້ນຖານຂອງການຝຶກອົບຮົມສຳລັບທຸກການສ້າງລະບຽບໃນຊ່ວງເຮັດກິດຈະກຳ

**ໃຊ້ເວລາ:** 20 ນາທີ

**ການກະກຽມອຸປະກອນ** ເຈ້ຍແຜ່ນໃຫຍ່, ບິກເພີດ

## ເລີ່ມກິດຈະກຳ

1. **ຄຳແນະນຳສຳລັບກິດຈະກຳ. ອ່ານດັງໆ:** ໃນພາກນີ້ ພວກເຮົາຈະໄດ້ສ້າງກົດລະບຽບໃນການດຳເນີນ/ເຮັດກິດຈະກຳທຸກຄັ້ງ. ພວກເຮົາຈະແລກປ່ຽນແຜນການດຳເນີນກິດຂອງພວກເຮົານຳພວກທ່ານໃນໄລຍະທ້າຍຊົ່ວໂມງ. ກົດລະບຽບເຫຼົ່ານີ້ພວກເຮົາຈະຕ້ອງໄດ້ປະຕິບັດໃນເວລາດຳເນີນກິດຈະກຳໃຫ້ມີຄວາມສະຫງົບ ແລະ ມີລະບຽບວິໄນ.
2. **ແນະນຳໃຫ້**ສະມາຊິກພາຍໃນກຸ່ມຄົ້ນຄິດ ແລະ ເວົ້າກ່ຽວກັບກົດລະບຽບທີ່ພວກເຂົາເຫັນວ່າສຳຄັນໃນເວລາດຳເນີນກິດຈະກຳ ຫຼື ເວລາເຮັດກິດຈະກຳໃນຄັ້ງຕໍ່ໄປ.
3. **ຂຽນ**ຄຳແນະນຳລົງໃນແຜ່ນເຈ້ຍ, ຕົວຢ່າງຂໍ້ຕ່າງໆດັ່ງລຸ່ມນີ້:

- ຈົ່ງໃຫ້ຄວາມເຄົາລົບຄວາມຮູ້ສຶກ ແລະ ຄວາມຄິດເຫັນຂອງຄົນອື່ນ
- ຈົ່ງສຸພາບ
- ຢ່າຕັດສິນວ່າ: ຄໍາເຫັນຂອງຕົນເອງຖືກຕ້ອງ ແລະ ຄໍາເຫັນຂອງຄົນອື່ນຜິດຢູ່ສະເໝີ
- ຢ່າຖືວ່າຄໍາເຫັນຂອງຜູ້ໃດຜູ້ໜຶ່ງທີ່ໄດ້ນໍາມາແລກປ່ຽນຢູ່ໃນກອງປະຊຸມເປັນຂອງຫຼິ້ນໆ
- ຕົງຕໍ່ເວລາ
- ຫ້າມລົມກັນ ຫຼື ລົບກວນໃນເວລາອະທິບາຍ

4. ພາຍຫຼັງ ຕັ້ງກົດລະບຽບແລ້ວ, **ອ່ານດັງໆ**: ກົດລະບຽບນີ້ ພວກເຮົາຈະໄດ້ປະຕິບັດໃນເວລາຮຽນ ຫຼື ເຮັດກິດຈະກໍາຕ່າງໆ. **ບອກ**ໃຫ້ກຸ່ມກະກຽມຕັ້ງກົດລະບຽບໃນທາງທີ່ມີສ່ວນຮ່ວມເຮັດໃຫ້ສະມາຊິກພາຍໃນກຸ່ມມີສະຕິໃນການປະຕິບັດກົດລະບຽບທີ່ໄດ້ຕັ້ງໄວ້ ແລະ ຊ່ວຍກັນຮັກສາເວລາໃນການເຮັດກິດຈະກໍາ.

## ກິດຈະກໍາ 4.1: ການທົດສອບ

**ຈຸດປະສົງ:** ເພື່ອສ້າງຄວາມເຂົ້າໃຈກ່ຽວກັບຄວາມຮູ້ ແລະ ການຝຶກຝົນຕົນເອງໃນປະຈຸບັນຂອງເດັກຕາມບົດບາດຍິງ-ຊາຍ, ໂພຊະນາການ, ສຸຂະອະນາໄມ, ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ.

**ເວລາ:** 20 ນາທີ

**ການກະກຽມອຸປະກອນ** ພິມແບບຟອມການທົດສອບ (ລວມທັງຄໍາຖາມກ່ຽວກັບບົດບາດ ຍິງ-ຊາຍ, ໂພຊະນາການ, ສຸຂະອະນາໄມ, ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ)

## ເລີ່ມກິດຈະກໍາ

**1. ຄໍາແນະນໍາສໍາລັບກິດຈະກໍາ. ອ່ານດັງໆ:** ໃນກິດຈະກໍານີ້ ພວກເຮົາຈະໃຫ້ແບບສອບຖາມກ່ຽວກັບບົດບາດ ຍິງ-ຊາຍ, ໂພຊະນາການ, ສຸຂະອະນາໄມ, ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ. ໃນແບບຟອມດັ່ງກ່າວຈະມີຫຼາຍຄໍາຖາມພ້ອມດ້ວຍຫຼາຍຄໍາຕອບທີ່ຈະໃຫ້ເຈົ້າເລືອກ: ໃຫ້ເຈົ້າໝາຍຕົກເອົາຄໍາຕອບທີ່ຖືກຕ້ອງທີ່ສຸດ.

ກິດຈະກໍາດັ່ງກ່າວຈະຊ່ວຍວັດແທກເຖິງລະດັບຄວາມຮູ້ທີ່ເຮົາມີໃນປະຈຸບັນ ແລະ ຄວາມເຂົ້າໃຈກ່ອນດໍາເນີນກິດຈະກໍາ ຫຼື ແລ້ວກິດຈະກໍາ.

**2. ຢາຍ**ແບບຟອມໃຫ້ນັກຮຽນ/ຜູ້ເຂົ້າຮ່ວມຄົນລະຊຸດ.

**3. ໃຫ້**ເວລາ 10 ນາທີ ເພື່ອເຕີມແບບຟອມໃຫ້ສໍາເລັດ

4. ຫຼັງຈາກ 10 ນາທີ ໃຫ້ພວກເຂົາເກັບແບບຟອມສົ່ງໃຫ້ອາຈານ/ຜູ້ນໍາພາທີມ

## ຂໍ້ແນະນຳສຳລັບອາຈານ

- ກວດແບບຟອມການທົດສອບ ແລະ ໃສ່ເຄື່ອງໝາຍພ້ອມໃຫ້ຄຳຕອບ
- ຍື່ນແບບຟອມນຳພະນັກງານທີ່ຮັບຜິດຊອບວຽກສຶກສາເມືອງ ຫຼື ພະນັກງານໂຄງການຮ່ວມມືປັບປຸງດ້ານໂພຊະນາການ.
- ຖ້າເປັນໄປບໍ່ໄດ້ ໃຫ້ນຳເອົາແບບຟອມມາໃນກອງປະຊຸມທວນຄືນປະຈຳໄຕມາດຄັ້ງທຳອິດ.

## ສະຫຼຸບ / ຄຳເວົ້າສຸດທ້າຍ

ການກຳນົດວາລະການເຮັດກິດຈະກຳເພື່ອນສອນເພື່ອນແມ່ນ(ທຸກໆ 2 ອາທິດ ພາຍໃນໜຶ່ງເດືອນ)

**ເວົ້າວ່າ:** ຕາຕະລາງຕໍ່ໄປນີ້ສະແດງເຖິງຕາຕະລາງເວລາທີ່ພວກເຮົາຈະໄດ້ປະຕິບັດໃນໄລຍະ 3 ເດືອນ ໃນຕໍ່ໜ້າ. ທຸກໆ 2 ອາທິດພວກເຮົາຈະມີການປະຊຸມດຳເນີນກິດຈະກຳຕ່າງໆຮ່ວມກັນ. ດັ່ງນັ້ນ ໃນ 2 ອາທິດນີ້ຕໍ່ໜ້ານີ້, ພວກເຮົາຈະເລີ່ມຮຽນກ່ຽວກັບໂພຊະນາການ. ຫຼັງຈາກນັ້ນສອງອາທິດ ພວກເຮົາຈະໄດ້ຮຽນຮູ້ເພີ່ມເຕີມກ່ຽວກັບໂພຊະນາການຕໍ່ ແລະ ອີກ 2 ອາທິດຖັດໄປກໍ່ເຊັ່ນດຽວກັນ. ແລະ ແລ້ວ 2 ອາທິດ ຫຼັງຈາກນັ້ນ ພວກເຮົາຈະໄດ້ຮຽນກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ອີກ 2 ອາທິດຖັດໄປ ແມ່ນຈະໄດ້ຮຽນຮູ້ກ່ຽວກັບບົດບາດ ຍິງ-ຊາຍ.

| | ລາຍລະອຽດຂອງບົດຮຽນ |
|---|---|
| 1 | ວິງມົນແຫ່ງມິດຕະພາບ/ທຳຄວາມຮູ້ຈັກກັນ |
| 2 | ກົດລະບຽບບົດບາດຍິງ-ຊາຍ, ຄວາມສະເໝີພາບ ແລະ ການປ່ຽນແປງຂອງກຸ່ມໄວໜຸ່ມ |
| 3 | ໂພຊະນາການ (ພາກທີ-1) |
| 4 | ໂພຊະນາການ (ພາກທີ-2) |
| 5 | ໂພຊະນາການ (ພາກທີ-3) |
| 6 | ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ |
| 7 | ນ້ຳ, ສຸຂາພິບານ ແລະ ສຸຂະອະນາໄມສ່ວນບຸກຄົນ |

**ເວົ້າວ່າ:** ກ່ອນຈະເຂົ້າບົດຮຽນທຸກບົດ, ພວກເຮົາຈະໃຫ້ທ່ານສະຫຼຸບໂດຍຫຍໍ້ກ່ຽວກັບບົດຮຽນທີ່ເຮົາໄດ້ຮຽນຊົ່ວໂມງກ່ອນໜ້ານີ້. ມີໃຜຕ້ອງການສະຫຼຸບບໍ່? ຜູ້ໃດທີ່ເກັ່ງກ່ຽວກັບເລື່ອງການສື່ສານ? ລໍຖ້າເບິ່ງວ່ານັກຮຽນຈະຈີ້ມືໄປຫາໃຜ. ທ່ານສະແດງບົດບາດທີ່ສຳຄັນໃນການຊ່ວຍເຫຼືອພວກເຮົາ (ຜູ້ນຳພາກິດຈະກຳກຸ່ມເພື່ອນສອນເພື່ອນ) ແລະ ເພື່ອນຮ່ວມຫ້ອງໄດ້ສະຫຼຸບຫົວທີ່ໄດ້ຮຽນ ແລະ ສິ່ງທີ່ເຮົາໄດ້ເຮັດຜ່ານມາ.

ໃນສອງສາມອາທິດຕໍ່ມາ ພວກເຮົາຈະໄດ້ເຮັດກິດຈະກຳທີ່ສະໜຸກສະໜານຫຼາຍໆຢ່າງ ແຕ່ການຮຽນຮູ້ຈາກກິດຈະກຳເຫຼົ່ານັ້ນຈະມີຄວາມສຳຄັນກັບພວກທ່ານຫຼາຍ ສະນັ້ນ ທຸກຄົນບໍ່ຄວນພາດໂອກາດນີ້!

**ໂຄງການ ຮ່ວມມືປັບປຸງດ້ານໂພຊະນາການ ແຂວງ ຫຼວງນໍ້າທາ**

ຈຸດປະສົງລວມຂອງໂຄງການ ແນໃສ່ເພື່ອຄໍ້າປະກັນດ້ານສະບຽງອາຫານ ແລະ ໂພຊະນາການ ໃນຄົວເຮືອນ ຢູ່ໃນເຂດຊົນນະບົດ ແລະ ສ້າງຄວາມອຸດົມສົມບູນດ້ານກະສິກຳແບບຍືນຍົງ ຢູ່ໃນຂັ້ນຄົວເຮືອນ ແລະ ຂັ້ນບ້ານຢູ່ໃນ ແຂວງ ຫຼວງນໍ້າທາ, ພ້ອມທັງປັບປຸງດ້ານໂພຊະນາການ ຂອງຜູ້ຍິງໄວໜຸ່ມ, ຜູ່ຍິງຖືພາ, ຜູ່ຍິງທີ່ຂາດສານອາຫານ ແລະ ເດັກນ້ອຍ ອາຍຸ ຕໍ່າກວ່າ 5 ປີ ລົງມາ ທີ່ຢູ່ໃນເຂດພື້ນທີ່ເປົ້າໝາຍຂອງໂຄງການ.

**ສະໜັບສະໜູນທຶນໂດຍ: ສະຫະພາບ ເອີຣົບ**

**ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ**

ຖະໜົນໜອງສ້າງທໍ່, ບ້ານໜອງສ້າງທໍ່, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ໄປສະນີ 4328
ໂທ: (856-21) 217 727, 212 991 E-mail: lao.info@careint.org